ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2023

30 ມິຖຸນາ 2023

Lao-Thai Friendship Road, Thongkang Village, Sisattanak District, P.O. Box 2392, Vientiane Capital. Lao PDR.
Tel: (856-21)316142. Fax: (856-21)316141, Email: edlgenhq@edlgen.com.la website: www.edlgen.com.la

ສາລະບານ

1. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ 1
2. ກົງຈັກການຈັດຕັ້ງ 2
   2.1 ໂຄງຮ່າງການຈັດຕັ້ງ 2
3. ຄະນະກຳມະການຕ່າງໆ 7
   3.1. ຄະນະກຳມະການຂອງສະພາບໍລິຫານ 7
   3.2. ກອງປະຊຸມສະພາບໍລິຫານ 8
      1. ຄະນະກຳມະການກວດສອບ 8
      2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ 9
      3. ຄະນະກຳມະການກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ 9
      4. ຄະນະກຳມະການຄຸ້ມຄອງບໍລິຫານ 9
   3.3 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່ 10
      1. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ) 10
      2. ຄະນະກຳມະການຄົ້ນຄວ້ານະໂຍບາຍ ແລະ ປະຕິບັດວິໃນ (ຄນຍວ) 10
4. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມ ແລະ ສັງຄົມ 10
   4.1 ວຽກງານດ້ານສິ່ງແວດລ້ອມ 10
   4.2 ວຽກງານທາງດ້ານສັງຄົມ 11
5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ 11
   5.1 ການຜະລິດ 12
   5.2 ລາຍຮັບ 12
   5.3 ລາຍຈ່າຍ 12
   5.4 ກຳໄລສຸດທິໃນການດຳເນີນທຸລະກິດ 12
   5.5 ການມອບພັນທະ 13

1. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

ວິໄສທັດ

1. ເປັນບໍລິສັດນຳໜ້າ ຂອງ ສປປ ລາວ ໃນການຜະລິດພະລັງງານໄຟຟ້າ ທີ່ໝັ້ນຄົງ ເພື່ອຕອບສະໜອງໃນ ການພັດທະນາ ເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂອງພູມິພາກຕາມທິດ ສີຂຽວ ແລະ ຍືນຍົງ.
2. ເປັນບໍລິສັດນຳໜ້າໃນການ ໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ໂຮງງານຜະລິດໄຟຟ້າໃນ ສປປ ລາວ ແລະ ໃນພູມິພາກ.
3. ເປັນບໍລິສັດນຳໜ້າ ທີ່ ສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນ.

ພາລະກິດ

1. ສະໜອງໄຟຟ້າ ດ້ວຍແຫຼ່ງພະລັງງານສະອາດ ແລະ ພະລັງງານທົດແທນ ໂດຍຄຳນຶງເຖິງສິ່ງແວດລ້ອມ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມິພາກ.
2. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ຈະແຈ້ງ, ໂປ່ງໃສ ແລະ ກວດສອບໄດ້.
3. ສົມທົບຢ່າງສະໜິດແໜ້ນ ກັບ ຄູ່ຮ່ວມຍຸດທະສາດ ແລະ ບໍລິສັດຈຳໜ່າຍພະລັງງານໄຟຟ້າໃນການ ສະໜອງພະລັງງານໄຟຟ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ພາຍໃນປະເທດ ແລະ ພູມິພາກ.
4. ຕັ້ງໜ້າຍົກສູງປະສິດທິພາບ ແລະ ພັດທະນາບໍລິສັດໃນທຸກດ້ານ ເພື່ອໃຫ້ກາຍເປັນທັງຜູ້ຜະລິດ ແລະ ໃຫ້ ບໍລິການຄຸ້ມຄອງ-ບຳລຸງຮັກສາ ໂຮງງານຜະລິດໄຟຟ້າ ໃນ ສປປ ລາວ ແລະ ພູມິພາກ.
5. ລົງທຶນໃນທຸລະກິດທີ່ເນັ້ນໃສ່ການສ້າງມູນຄ່າເພີ່ມ ທັງໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອໃຫ້ໄດ້ຮັບຜົນ ຕອບແທນ ທີ່ ສູງສຸດ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ.

ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງແລະສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນ ທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການ ຜູ້ຜະລິດໄຟຟ້າເອກະລາດ(Independent Power Producer: IPP);
3. ຮັບໝໍ້ບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operation & Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

2. ກິຈະການຈັດຕັ້ງ

2.1 ໂຄງຮ່າງການຈັດຕັ້ງ

ຮອດວັນທີ 30 ມິຖຸນາ 2023 ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍ ສະພາບໍລິຫານ 12 ທ່ານ (ໃນນີ້ ຄະນະກຳມະການອິດສະຫຼະມີ 3 ທ່ານ) ຄະນະຜູ້ອຳນວຍການໃຫຍ່ 4 ທ່ານ, ມີ 5 ຝ່າຍ, 20 ພະແນກ ແລະ 13 ເຂື່ອນ. ລວມມີຈຳນວນພົນ ຂອງ ຜ-ຟຟລ ແລະ ບໍລິສັດໃນເຄືອ ມີທັງໝົດ 807 ຄົນ, ໃນນີ້ຍິງມີ 143 ຄົນ



ຄະນະສະພາບໍລິຫານ ແລະ ປະຫວັດຫຍໍ້
ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ

ທ່ານ ສຸລິວັດ ສຸວັນນະຈຸມຄຳ
ປະທານສະພາບໍລິຫານ

* ວັນເດືອນປີເກີດ: 30/10/1977
* ສັນຊາດ: ລາວ
* ຕຳແໜ່ງ: ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງ ການເງິນ.
* ລະດັບການສຶກສາ:
  - ປະລິນຍາໂທ ດ້ານວິຊາພົວພັນຕ່າງປະເທດດ້ານເສດຖະກິດ ແລະ ການເມືອງ, ມະຫາວິທະຍາໄລ Lodz, LODZ, ປະເທດໂປໂລຍ.

ທ່ານ ຈັນທະບຸນ ສຸກອາລຸນ
ຮອງປະທານສະພາບໍລິຫານ

* ວັນເດືອນປີເກີດ: 03/05/1973
* ສັນຊາດ: ລາວ
* ຕຳແໜ່ງ: ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, ເອກການເງິນ emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ.
  - ປະລິນຍາຕີສາຂາ ວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.

ທ່ານ ວັນແສງ ວັນນະວົງ
ກຳມະການ

* ວັນເດືອນປີເກີດ: 30/03/1974
* ສັນຊາດ: ລາວ
* ຕຳແໜ່ງ: ຮັກສາການ ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
* ລະດັບການສຶກສາ:
  - ປະລິນຍາໂທ, ສາຂາການບັນຊີ, ຢູ່ ມະຫາວິທະຍາໄລແຫ່ງຊາດລາວ.

ທ່ານ ສົມພິດ ແກ້ວວິຈິດ
ກຳມະການ

* ວັນເດືອນປີເກີດ: 01/05/1968
* ສັນຊາດ: ລາວ
* ຕຳແໜ່ງ: ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ:
  - ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ ມະຫາວິທະຍາໄລແຫ່ງຊາດລາວ.

ທ່ານ ປະສົມເພັດ ຄຳຕັນ
ກຳມະການ

* ວັນເດືອນປີເກີດ: 25/05/1970
* ສັນຊາດ: ລາວ
* ຕຳແໜ່ງ: ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກະຊວງການເງິນ
* ລະດັບການສຶກສາ:
  - ປະລິນຍາໂທ ດ້ານເສດຖະກິດ-ທຸລະກິດ, ທີ່ມະຫາໄລ ກຸງຮີ, ປະເທດ ສ ເກົາຫຼີ.

ທ່ານ ສຸກາສະຫວາດ ໂສສຸພັນ
ກຳມະການ

* ວັນເດືອນປີເກີດ: 20/03/1985
* ສັນຊາດ: ລາວ
* ຕຳແໜ່ງ: ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທສາຂາ ວິຊາວິສະວະກຳພະລັງງານ-ສິ່ງແວດລ້ອມ, ປະເທດຍີ່ປຸ່ນ.

ທ່ານ ພົງສະຫວັດ ເສນາພອນ
ກຳມະການ

* ວັນເດືອນປີເກີດ: 10/10/1978
* ສັນຊາດ: ລາວ
* ຕຳແໜ່ງ: ປະທານສະພາບໍລິຫານ ແລະ ປະທານບໍລິຫານ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານຈຳກັດຜູ້ດຽວ.
* ລະດັບການສຶກສາ: ວິທະຍາໄລ ບໍລິຫານທຸລະກິດ ແສງສະຫວັນ.

ທ່ານ ສົມລັດ ເມກອາກາດ
ກຳມະການ

* ວັນເດືອນປີເກີດ: 21/07/1972
* ສັນຊາດ: ລາວ
* ຕຳແໜ່ງ: ຜູ້ອຳນວຍການ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານຈຳກັດຜູ້ດຽວ.
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ການບໍລິຫານຄຸ້ມຄອງ, ທີ່ມະຫາວິທະຍາໄລຊິງຫົວ, ສປ ຈີນ

* ວັນເດືອນປີເກີດ: 12/03/1978
* ສັນຊາດ: ໄທ
* ຕຳແໜ່ງ: ຄະນະສະພາບໍລິຫານ ບໍລິສັດ ໄຟຟ້າ ຫົງສາ ຈຳກັດ ແລະ ບໍລິສັດ ພູໄຟ ມາຍນິ່ງ ຈຳກັດ
  ຜູ້ອຳນວຍການ ບໍລິສັດ ຣາຊລາວ ບໍລິການ ຈຳກັດ
  ຜູ້ອຳນວຍການ ບໍລິສັດ ເອເຊຍ ວໍເຕີ ຈຳກັດ
  ຜູ້ອຳນວຍການ ຟໍເລສ ລີນີ້ເອໂບ ດີເວລັບເມັ້ນ
* ລະດັບການສຶກສາ:
  - ປະລິນຍາໂທສາຂາວິທະຍາສາດ (ການເງິນ-ການທະນາຄານ) ຫຼັກສູດ ພາສາອັງກິດ, ມະຫາວິທະຍາໄລ ຈຸລາລົງກອນ, ປະເທດໄທ.
  - ປະລິນຍາໂທສາຂາວິສະວະກຳໄຟຟ້າ, ມະຫາວິທະຍາໄລ ຈຸລາລົງກອນ, ປະເທດໄທ.

ທ່ານ ຊິນລະວິດ ວິນິດໄສ
ກຳມະການ

* ວັນເດືອນປີເກີດ: 13/02/1958
* ສັນຊາດ: ລາວ
* ຕຳແໜ່ງ: ຄະນະກຳມະການຄຸ້ມຄອງຫຼັກຊັບ
* ລະດັບການສຶກສາ:
  - ປະລິນຍາໂທສາຂາກົດໝາຍ ແລະ ການບໍລິຫານພາກລັດ

ທ່ານ ຄຳມຸນ ວິພິງໄຊ
ກຳມະການອິດສະຫລະ

* ວັນເດືອນປີເກີດ: 29/12/1975
* ສັນຊາດ: ລາວ
* ຕຳແໜ່ງ: ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
* ລະດັບການສຶກສາ: ປະລິນຍາໂທ ສາຂາ ເສດຖະສາດ, ປະເທດອິດສະຕາລີ.

ທ່ານ ຄຳແກ້ວ ວິສີສົມບັດ
ກຳມະການອິດສະຫລະ

* ວັນເດືອນປີເກີດ: 22/08/1979
* ສັນຊາດ: ລາວ
* ຕຳແໜ່ງ: ຮອງຫົວໜ້າກົມຄົ້ນຄວ້າສັງລວມ, ຫ້ອງວ່າການສູນກາງພັກ
* ລະດັບການສຶກສາ: ປະລິນຍາເອກສາຂາເສດຖະສາດ ມະຫາວິທະຍາໄລໂກເບ ປະເທດຍີ່ປຸ່ນ

ທ່ານ ປອ. ພັນປະກິດ ອ່ອນພັນດາລາ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທ່ານ ວັນແສງ ວັນນະວົງ
ຮັກສາການຜູ້ອຳນວຍການໃຫຍ່

ທ່ານ ວົງສະກຸນ ຍິ່ງຍົງ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ

ທ່ານ ນ. ສຸກສັນ ພົງພິລາ
ຮອງຜູ້ອຳນວຍການໃຫຍ່
ສາຍງານບໍລິຫານ

ທ່ານ ປອ. ກຸນລະພັນ ວົງນາທີ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ; ຕູ້ ປ.ນ. 2392
ໂທລະສັບ: (+856-21) 316 142; ໂທລະສານ: (+856-21) 316 141; ອີເມວ: edlgenhq@edlgen.com.la; ເວັບໄຊຣ: www.edlgen.com.la

3. ຄະນະກຳມະການຕ່າງໆ

ເພື່ອເຮັດໃຫ້ວຽກງານຂອງ ບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ສອດຄ່ອງກັບຂໍ້ກຳນົດ, ລະບຽບກົດໝາຍທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນປະກອບມີ: ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ.

3.1. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ຜ-ຟຟລ ປະກອບດ້ວຍ 5 ຄະນະກຳມະການ ເຊິ່ງໃນແຕ່ລະຄະນະກຳມະການປະກອບດ້ວຍ ສະມາຊິກສະພາບໍລິຫານ ຕາມລາຍລະອຽດດັ່ງນີ້:

ຄະນະກຳມະການກວດສອບ

1.	ທ່ານ ຄຳມູນ ວິພິງໄຊ	ກຳມະການອິດສະຫຼະ	ເປັນປະທານ
2.	ທ່ານ ສົມລັດ ເມກອາກາດ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3.	ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການອິດສະຫຼະ	ເປັນກຳມະການ
4.	ທ່ານ ປະສົມເພັດ ຄຳຕັນ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1.	ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນປະທານ;
2.	ທ່ານ ພິງສະຫວັດ ເສນາພອນ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3.	ທ່ານ ປອ. ພັນປະກິດ ອ່ອນພັນດາລາ	ກຳມະການອິດສະຫຼະ	ເປັນກຳມະການ
4.	ທ່ານ ປະສົມເພັດ ຄຳຕັນ	ກຳມະການສະພາບໍລິຫານ	ເປັນກຳມະການ
5.	ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

1.	ທ່ານ ຈັນທະບູນ ສຸກອາລຸນ	ຮອງປະທານສະພາບໍລິຫານ	ເປັນປະທານ;
2.	ທ່ານ ພິງສະຫວັດ ເສນາພອນ	ກຳມະການສະພາບໍລິຫານ	ເປັນຮອງປະທານ;
3.	ທ່ານ ສຸລິວັດ ສຸວັນນະຈູມຄຳ	ປະທານສະພາບໍລິຫານ	ເປັນກຳມະການ;
4.	ທ່ານ ຊິນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄຸ້ມຄອງບໍລິຫານ

1.	ທ່ານ ຈັນທະບູນ ສຸກອາລຸນ	ຮອງປະທານສະພາບໍລິຫານ	ເປັນປະທານ;
2.	ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນຮອງປະທານ;
3.	ທ່ານ ສົມລັດ ເມກອາກາດ	ກຳມະການສະພາບໍລິຫານ	ເປັນກຳມະການ;
4.	ທ່ານ ວັນແສງ ວັນນະວົງ	ກຳມະການສະພາບໍລິຫານ	ເປັນກຳມະການ.
5.	ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	ເປັນກຳມະການ.

ຄະນະກຳມະການຮັບຜິດຊອບໂອນໂຄງການເຂື່ອນ ແລະ ໂອ້ນຮຸ້ນ ຂອງ ຟຟລ ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ລະຫວ່າງ ລັດວິສາຫະກິດໄຟຟ້າລາວ (ຟຟລ) ແລະ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ)

1.	ທ່ານ ສຸກສະຫວາດ ໂສສຸພັນ	ກຳມະການສະພາບໍລິຫານ	ເປັນປະທານ.
2.	ທ່ານ ພິງສະຫວັດ ເສນາພອນ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3.	ທ່ານ ຊິນລະວິດ ວິນິດໄສ	ກຳມະການສະພາບໍລິຫານ	ເປັນກຳມະການ
4.	ທ່ານ ປະສົມເພັດ ຄຳຕັນ	ກຳມະການສະພາບໍລິຫານ	ເປັນກຳມະການ
5.	ທ່ານ ວັນແສງ ວັນນະວົງ	ກຳມະການສະພາບໍລິຫານ	ເປັນກຳມະການ.

3.2. ກອງປະຊຸມສະພາບໍລິຫານ

ການດຳເນີນງານປະຈຳ 6 ເດືອນຕົ້ນປີ 2023 ສະພາບໍລິຫານ ໄດ້ຈັດກອງປະຊຸມຂຶ້ນ 3 ຄັ້ງຄື:

- ກອງປະຊຸມສະພາບໍລິຫານ ສະໄໝວິສາມັນຄັ້ງທີ 1/2023, ຄັ້ງວັນທີ 09 ກຸມພາ 2023 ມີລາຍລະອຽດທີ່ສຳຄັນຄື:
  - ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປື້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.
  - ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

- ກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ 1/2023 ຄັ້ງວັນທີ 20 ມີນາ 2023 ລາຍລະອຽດທີ່ສຳຄັນຄື:
  - ບົດລາຍງານການດຳເນີນທຸລະກິດ ແລະ ບົດລາຍງານການເງິນ ຂອງ ຜ-ຟຟລ ປະຈຳປີ 2022.
  - ການຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດ ປະຈຳປີ 2022.

  - ການເພີ່ມຕົວຄູນຄັດສະນີເງິນເດືອນພື້ນຖານ ຂອງ ພະນັກງານ ຜ-ຟຟລ ຂຶ້ນ 12 ສ່ວນຮ້ອຍ ໃນປີ 2023
  - ການແຕ່ງຕັ້ງປະທານສະພາບໍລິຫານ, ກຳມະການສະພາຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງສະພາ ບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາ ບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານຂອງບໍລິສັດ.

- ກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ 2/2023 ຄັ້ງວັນທີ 11 ພຶດສະພາ 2023 ລາຍລະອຽດດັ່ງນີ້:
  - ບົດລາຍງານການດຳເນີນທຸລະກິດ ແລະ ບົດລາຍງານການເງິນ ຂອງ ຜ-ຟຟລ ປະຈຳໄຕມາດ 1 ປີ 2023.

1. ຄະນະກຳມະການກວດສອບ

ຄະນະກຳມະການກວດສອບໄດ້ຈັດກອງປະຊຸມ ປະຈຳ 6 ເດືອນຕົ້ນປີ 2023 ຜ່ານມາມີຄືດັ່ງນີ້:

❖ ກອງປະຊຸມສາມັນຄັ້ງທີ I ໄດ້ຈັດຂຶ້ນໃນວັນທີ 05 ພຶດສະພາ 2023 ເພື່ອປຶກສາຫາລືກ່ຽວກັບ.

1. ທົບທວນ ແລະ ມີຄຳເຫັນຕໍ່ບົດລາຍງານທາງການເງິນປະຈຳໄຕມາດ I ປີ 2023 ປະກອບມີ: ໃບລາຍງານສະຖານະທາງການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ.
2. ທົບທວນຜົນການກວດສອບ ແລະ ຜົນການກວດກາຂອງຝ່າຍກວດສອບປະຈຳໄຕມາດ I ປີ 2023 ຄື:
   - ຜົນການກວດສອບຂອງເຂື່ອນບໍລິສັດນ້ຳບິພາວເວີ້ ຈຳກັດ ປະກອບມີ: ຂະບວນການການບໍລິຫານຈັດການ, ຂະບວນການງົບປະມານແຜນການ, ຂະບວນການການຈັດຊື້-ຈັດຈ້າງ, ຂະບວນການລາຍຈ່າຍ ແລະ ຂະບວນການລົງບັນທຶກບັນຊີ.
   - ຜົນການກວດກາພາກເຕັກນິກປະກອບມີ: ພາກໄຟຟ້າ, ພາກກົນຈັກ ແລະ ພາກຄວາມປອດໄພຂອງເຂື່ອນໄຟຟ້ານ້ຳຄານ 2-3, ເຂື່ອນໄຟຟ້ານ້ຳງື່ມ-1 ແລະ ເຂື່ອນໄຟຟ້ານ້ຳຈຽນ.
   - ຕິດຕາມການປັບປຸງແກ້ໄຂຜົນການກວດສອບໃນປີ 2022 ຂອງເຂື່ອນໄຟຟ້ານ້ຳງື່ມ-1.

❖ ໄດ້ເປີດກອງປະຊຸມສາມັນຄັ້ງທີ II ໄດ້ຈັດຂຶ້ນໃນວັນທີ 18 ສິງຫາ 2023 ເພື່ອປຶກສາຫາລືກ່ຽວກັບ.

1. ທົບທວນບົດແນະນຳຜູ້ບໍລິຫານ Managermant letter ຈາກຜູ້ກວດສອບພາຍນອກ Ernst & yong - Lao
2. ທົບທວນ ແລະ ມີຄຳເຫັນຕໍ່ບົດລາຍງານທາງການເງິນປະຈຳຫົກເດືອນຕົ້ນປີ 2023ປະກອບມີ: ໃບລາຍງານສະຖານະທາງການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດ.

3. ທົບທວນຜົນການກວດສອບ ແລະ ຜົນການກວດກາຂອງ ຝ່າຍກວດສອບປະຈຳຫົກເດືອນຕົ້ນປີ 2023 ຄື:
   - ຜົນການກວດສອບຂອງຝ່າຍການເງິນ, ຝ່າຍພັດທະນາທຸລະກິດ, ຝ່າຍບໍລິຫານງານສະໜັບສະໜຸນອົງກອນ, ຝ່າຍຜະລິດ, ເຂື່ອນໄຟຟ້າເຊເສັດ1-2, ເຂື່ອນໄຟຟ້າເຊລະບໍ, ເຂື່ອນໄຟຟ້ານ້ຳຈຽນ, ເຂື່ອນໄຟຟ້າຫ້ວຍລຳພັນ ແລະ ເຂື່ອນໄຟຟ້າເຊເສັດ 3.
   - ຜົນການກວດກາພາກເຕັກນິກປະກອບມີ: ພາກໄຟຟ້າ, ພາກກົນຈັກ ແລະ ພາກຄວາມປອດໄພ. ຂອງ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ເຂື່ອນໄຟຟ້າເຊເສັດ3, ເຂື່ອນໄຟຟ້ານ້ຳເລິກ ແລະ ເຂື່ອນໄຟຟ້ານ້ຳມັງ 3.

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ໃນການດຳເນີນງານປະຈຳ 6 ເດືອນຕົ້ນປີ 2023 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ຈັດກອງປະຊຸມຂຶ້ນ 3 ຄັ້ງ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າກ່ຽວກັບບັນຫາຕ່າງໆ ແລະ ຄວາມສ່ຽງເຊັ່ນ:

- ຄົ້ນຄວ້າກ່ຽວກັບການເຈລະຈາ ເພື່ອກ້າວໄປເຖິງການເຮັດສັນຍາ ຂໍເປີດວົງເງິນກູ້ຢືມ ເພື່ອເປັນແຫຼ່ງທຶນໝຸນວຽນ ຈາກທະນາຄານ ຫວຽດຕິນລາວ ຈຳກັດ.
- ລາຍງານຄວາມຄືບໜ້າກ່ຽວກັບການເຈລະຈາ ແລະ ການເຮັດສັນຍາເງິນກູ້ຢືມ ເພື່ອເປັນແຫຼ່ງໝຸນວຽນ ໃນ ຜ-ຟຟລ ກັບທະນາຄານສິ່ງເສີມກະສິກຳ
- ລາຍງານສະພາບຄ່ອງຂອງ ຜ-ຟຟລ ໃນເດືອນ 1-2 ປີ 2023 ແລະ ຄາດຄະເນສະພາບຄອງການເງິນ ໄລຍະເດືອນ 03-05/2023
- ການປຽນອັດຕາດອກເບ້ຍລອຍຕົວຂອງຮຸ້ນກູ້ ປີ 2014 ທີ່ນຳໃຊ້ Libor ມາເປັນ SOFR (Secured Overnight Financing Rate) ກັບທະນາຄານກຸງສີອຍຸດທະຍາ ແລະ ທະນາຄານກະສິກອນໄທ
- ລາຍງານຄວາມຄືບໜ້າການໂອນເຂື່ອນຂອງ ຜ-ຟຟລ
- ລາຍງານຄວາມຄືບໜ້າຂອງສັນຍາເງິນກູ້ ລະຫວ່າງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ແລະ ທະນາຄານສິ່ງເສີມກະສິກຳ ຈຳກັດ (ທສກ)
- ການຊອກຫາແຫຼ່ງທຶນສຳຮອງເພື່ອຊຳລະຄືນຮຸ້ນກູ້ ແລະ ເງິນກູ້ໂດຍການ ກູ້ເງິນ ກັບ ບັນດາທະນາຄານ ພາຍໃນປະເທດ
- ລາຍງານການສຶກສາອອກຈຳໜ່າຍຮຸ້ນກູ້ໃນ ສປປລາວ ເພື່ອເປັນແຫຼ່ງທຶນສຳຮອງໃຫ້ ຜ-ຟຟລ.

3. ຄະນະກຳມະການກຳມະການຄັດເລືອກແລະ ກຳນົດຄ່າຕອບແທນ

ໃນການດຳເນີນງານປະຈຳ 6 ເດືອນຕົ້ນປີ 2023 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ ໄດ້ຈັດກອງປະຊຸມຂຶ້ນ 1 ຄັ້ງ ເຊິ່ງກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງດັ່ງນີ້:

- ການຄັດເລືອກ ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການ ສະພາບໍລິຫານບໍລິສັດ.
- ການພິຈາລະນາ ປັບປຸງຕົວຄູນດັດສະນີເງິນເດືອນພື້ນຖານໃຫ້ແກ່ ພະນັກງານ-ກຳມະກອນ ຜ-ຟຟລ.
- ການພິຈາລະນາ ເບີກຈ່າຍເງິນບຳເນັດຂອງສະພາບໍລິຫານ ແລະ ພະນັກງານ ຂອງບໍລິສັດ ປະຈຳປີ 2022.

4. ຄະນະກຳມະການຄຸ້ມຄອງບໍລິຫານ

ໃນການດຳເນີນງານປະຈຳປະຈຳ 6 ເດືອນຕົ້ນປີ 2023 ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ຈັດກອງປະຊຸມຂຶ້ນ 1 ຄັ້ງຄື ກອງປະຊຸມສະໄໝສາມັນ ຄັ້ງທີ I/2023, ໃນວັນທີ 08 ກຸມພາ 2023 ເຊິ່ງກອງປະຊຸມໄດ້ພິຈາລະນາ ການຮັບ ຮອງແຜນງົບປະມານການດຳເນີນທຸລະກິດຂອງ ຜ-ຟຟລ ປີ 2023 ແລະ ການຮັບຮອງໂຄງຮ່າງການຈັດຕັ້ງ ຂອງເຂື່ອນໄຟຟ້ານ້ຳງື່ມ1 ແລະ ເຂື່ອນໄຟຟ້ານ້ຳຊອງ.

3.3 ຄະນະກຳມະການຂອງຄະນະອຳນວຍການໃຫຍ່

1. ຄະນະກຳມະການຈັດຊື້ແລະ ສະໜອງວັດສະດຸອຸປະກອນ(ຄຈຊ)

ໃນການດຳເນີນງານປະຈຳ 6 ເດືອນຕົ້ນປີ 2023 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ຈັດຈ້າງ, ໂດຍ ແບ່ງອອກເປັນ 03 ພາກ ດັ່ງນີ້:

- ພາກ ການປະຕິບັດວຽກ ຈຳນວນ: 10 ໂຄງການ
- ພາກ ຈັດຊື້ສິນຄ້າ ຈຳນວນ: 07 ໂຄງການ
- ພາກ ສະໜອງການບໍລິການ ຈຳນວນ: 04 ໂຄງການ

2. ຄະນະກຳມະການຄົ້ນຄວ້ານະໂຍບາຍແລະ ປະຕິບັດວິໄນ (ຄນຍວ)

ໃນການດຳເນີນງານ 6 ເດືອນຕົ້ນ ປີ 2023 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ຈັດກອງປະຊຸມຂຶ້ນ 2 ຄັ້ງ, ໄດ້ຄົ້ນຄວ້າ ແລະ ຕີກລົງເຫັນດີຮັບຮອງເອົາບັນດາຂໍ້ກຳນົດຕ່າງໆດັ່ງນີ້:

- ຂໍ້ກຳນົດວ່າດ້ວຍພະນັກງານສັນຍາຈ້າງ (ສະບັບປັບປຸງຄັ້ງທີ 5).
- ຂໍ້ກຳນົດວ່າດ້ວຍການປະກອບພາຫະນະ ແລະ ນ້ຳມັນເຊື້ອໄຟໃຫ້ແກ່ພະນັກງານກຳມະກອນ ເພື່ອເຄື່ອນໄຫວວຽກງານການດຳເນີນທຸລະກິດ (ສະບັບປັບປຸງຄັ້ງທີ 4).
- ກົດລະບຽບຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ສະບັບປັບປຸງຄັ້ງທີ 13).

4. ວຽກງານການເຄື່ອນໄຫວດ້ານສິ່ງແວດລ້ອມແລະ ສັງຄົມ

4.1 ວຽກງານດ້ານສິ່ງແວດລ້ອມ

- ສະໜອງງົບປະມານ ແລະ ລົງສະໜາມ ຮ່ວມກັບ ກົມທຸລະກິດພະລັງງານ ຕິດຕາມໂຄງການພັດທະນາຊຸມຊົນ ປີ 2022 ແລະ ຈັດກອງປະຊຸມປຶກສາຫາລືຄັດເລືອກກິດຈະກຳໃນການນຳໃຊ້ທຶນພັດທະນາຊຸມຊົນປີ 2023.
- ສຳເລັດການປັບປຸງ ບົດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ-ສັງຄົມຂອງເຂື່ອນໄຟຟ້ານ້ຳສະນາ.
- ວັນທີ 27 ມັງກອນ 2023 ໄດ້ຈັດກອງປະຊຸມປຶກສາຫາລືການສະເໜີດຳເນີນການຊື້-ຂາຍຄາບອນ ຂອງເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ.
- ໃນເດືອນ ມີນາ ໄດ້ລົງຕິດຕາມ ແລະ ຈັດກອງປະຊຸມຮ່ວມກັບອຳນາດການປົກຄອງຂັ້ນທ້ອງຖິ່ນ ປຶກສາຫາລືສະຫຼຸບຜົນໄດ້ຮັບຈຸດດີ ແລະ ຈຸດອ່ອນ ກ່ຽວກັບການຈັດຕັ້ງປະຕິບັດແຜນການຟື້ນຟູຊີວິດການເປັນຢູ່ ແລະ ການຝຶກຝົນວິຊາອາຊີບໃນໄລຍະປີ 2022 ຂອງປະຊາຊົນຂອງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ແລະ ເຂື່ອນໄຟຟ້ານ້ຳຄານ 2.
- ສືບຕໍ່ປັບປຸງ ບົດແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ-ສັງຄົມ ຂອງເຂື່ອນໄຟຟ້ານ້ຳຄານ 2, ນ້ຳຄານ 3, ນ້ຳງື່ມ-1 ພາກຂະຫຍາຍ, ນ້ຳຈຽມ, ເຊເສັດ 2, ເຊເສັດ 3 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ເພື່ອນຳສົ່ງໃຫ້ກັບກົມຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ໄດ້ສະໜອງງົບປະມານໃນການລົງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດ ລ້ອມ ສັງຄົມ ແລະ ທຳມະຊາດ ຂອງເຂື່ອນໄຟຟ້ານ້ຳຈຽມ ໃຫ້ແກ່ທີມງານ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ.
- ໄດ້ປະກອບຕໍ່ກັບຄຳເຫັນ ກ່ຽວກັບ Kotra vientaine ໃນການເລີ່ມຕົ້ນຮ່າງແຜນແມ່ບົດສຳລັບການຈັດຕັ້ງ ປະຕິບັດລະບົບການຂາຍຄາບອນໃນ ສປປ ລາວ.
- ຜ-ຟຟລ ໄດ້ຈັດພິທີປູກຕົ້ນໄມ້ ແລະ ປ່ອຍປາເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດປະຈຳປີ 2023 ໂດຍໄດ້ຈັດພິທີຂຶ້ນຢ່າງເປັນທາງການໃນວັນທີ 03/06/2023 ທີ່ ເຂື່ອນໄຟຟ້ານ້ຳເລິກ ໄດ້ມີການປູກຕົ້ນໄມ້ 300 ຕົ້ນ ແລະ ປ່ອຍປາຈຳນວນ 10,000 ໂຕ ແລະ ມອບອຸປະກອນການຮຽນການສອນ ແລະ ເຄື່ອງກິລາຈຳນວນໜຶ່ງ ໃຫ້

ນ້ອງນັກຮຽນ ບ້ານພູປາມັນ ແລະ ບ້ານຖ້ຳດິນ, ແຂວງໄຊສົມບູນນອກຈາກນີ້ໃນທຸກໆເຂື່ອນຂອງ ຜ-ຟຟລ ກໍ່ໄດ້ມີການຈັດງານປູກຕົ້ນໄມ້ ແລະ ປ່ອຍປາຮ່ວມກັບອຳນາດການປົກຄອງທ້ອງຖິ່ນຂຶ້ນຢ່າງພ້ອມພຽງ.

- ໄດ້ຈັດຕັ້ງປະຕິບັດການປູກຕົ້ນໄມ້ທົດແທນ ພື້ນທີ່ຖືກນ້ຳຖ້ວມໃນຊ່ວງໄລຍະການກໍ່ສ້າງ ຂອງ ເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໃນພື້ນທີ່ 1 ເຮັກຕາຕໍ່ປີ ເພື່ອຟື້ນຟູເຂດພື້ນທີ່ຄຸ້ມຄອງອ່າງໂຕ່ງ ຂອງເຂື່ອນ ປະຈຳປີ 2023.
- ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ແນວຄິດກ່ຽວກັບການສະໜັບສະໜູນດ້ານການເງິນແກ່ SMEs ເພື່ອຄຸ້ມຄອງສິ່ງແວດລ້ອມ ແລະ ສິ່ງເສດເຫຼືອ ຈັດໂດຍກອງທຶນປົກປັກຮັກສາສິ່ງແວດລ້ອມ.
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ຮ່າງຍຸດທະສາດກ່ຽວກັບການລະດົມທຶນ ແລະ ແຜນການດຳເນີນງານ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ 2023-2030 ຈັດໂດຍກອງທຶນປົກປັກຮັກສາສິ່ງແວດລ້ອມ.
- ບັນດາເຂື່ອນໄຟຟ້າ ຂອງ ຜ-ຟຟລ ຄຸ້ມຄອງ ແມ່ນໄດ້ນຳສິ່ງບົດລາຍງານ ການຕິດຕາມທາງດ້ານສິ່ງແວດລ້ອມ-ສັງຄົມ ໃນການດຳເນີນງານ ປະຈຳເດືອນ ຢ່າງເປັນປົກກະຕິທຸກໆເດືອນ ເພື່ອຕິດຕາມສະພາບສິ່ງແວດລ້ອມ-ສັງຄົມ ອ້ອມຂ້າງເຂື່ອນ.
- ບັນດາເຂື່ອນໄຟຟ້າຂອງ ຜ-ຟຟລ ຄຸ້ມຄອງ ແມ່ນໄດ້ມີການຕິດຕາມລະດັບນ້ຳຂຶ້ນ-ລົງທ້າຍເຂື່ອນ ແລະ ໜ້າເຂື່ອນ, ການກວດກາຄຸນນະພາບນ້ຳ, ລະບົບເຕືອນໄພສຸກເສີນ ແລະ ອານາໄມໜ້າອ່າງຢ່າງເປັນປະຈຳ ພ້ອມນັ້ນກໍ່ໄດ້ມີການສຳຫຼວດບໍລິເວນອ່າງໂຕ່ງ, ສະພາບປ່າໄມ້ ລວມເຖິງຄວາມອຸດົມສົມບູນຂອງທຳມະຊາດບໍລິເວນອ້ອມຮອບເຂື່ອນ.

4.2 ວຽກງານທາງດ້ານສັງຄົມ

- ໄດ້ລົງສະໜາມສຳຫຼວດຊີວິດການເປັນຢູ່ຂອງປະຊາຊົນ ເຂດໜ້າອ່າງ ນ້ຳງື່ມ-1, ໂຮງຮຽນ ທີ່ບ້ານດອນໄຊ ອຸດົມເຂດ 2 ແລະ ບ້ານໃໝ່ ເພື່ອເກັບກຳຂໍ້ມູນ ແລະ ວາງແຜນໃນການຊ່ວຍເຫຼືອໃນອະນາຄົດ.
- ໄດ້ຈັດຕັ້ງປະຕິບັດໂຄງການ ຮັກນີ້ແດ່ພີ່ນ້ອງ ປີ 4 ເພື່ອຊ່ວຍເຫຼືອນ້ອງນັກຮຽນ ໂຮງຮຽນໝວດປະຖົມບ້ານ ແຊລະບຳ, ເມືອງ ຊະນະສົມບູນ, ແຂວງ ຈຳປາສັກ.
- ໄດ້ຈັດຕັ້ງປະຕິບັດການສ້ອມແປງ ແລະ ຕິດຕັ້ງໂທລະໂຄ່ງທີ່ເປ່ເພຄືນໃຫມ່ ໃຫ້ແກ່ບັນດາບ້ານຢູ່ເຂດລຸ່ມເຂື່ອນໄຟຟ້ານ້ຳງື່ມ-1 ຈຳນວນ 6 ບ້ານ ແລະ ເຂື່ອນໄຟຟ້ານ້ຳຊອງ ຈຳນວນ 3 ບ້ານ ເພື່ອໃຊ້ເຂົ້າໃນການແຈ້ງເຕືອນຂ່າວສານຕ່າງໆໃນກໍລະນີເກີດເຫດສຸກເສີນ ການປ່ອຍນ້ຳຈາກເຂື່ອນ.
- ໄດ້ອະນຸມັດງົບປະມານໃຫ້ແກ່ ກົມທຸລະກິດພະລັງງານ ເພື່ອເຂົ້າຮ່ວມໃນການຕິດຕາມ ແລະ ກວດກາ ການຕໍ່ເຕີມອາຄານໂຮງຮຽນອະນຸບານໝວດປະຖົມເຊເສັດ ແລະ ຂະຫຍາຍຕາຂ່າຍແຮງຕ່ຳ 0,4 kV ເຂົ້າບ້ານດ່າເຊ້ຍ, ເມືອງເລົ່າງາມ, ແຂວງສາລະວັນ.
- ໄດ້ຈັດຕັ້ງປະຕິບັດກິດຈະກຳຊ່ວຍເຫຼືອສັງຄົມ ຮ່ວມກັບ ຟຟລ ໃນການປັບປຸງລະບົບທໍ່ນ້ຳກະສິກຳ ບ້ານນາຫວ້າ, ເມືອງທຸລະຄົມ, ແຂວງວຽງຈັນ ເຂື່ອນໄຟຟ້ານ້ຳມັງ 3.
- ໃນນີ້ບັນດາເຂື່ອນ ຂອງ ຜ-ຟຟລ ແມ່ນໄດ້ເອົາໃຈໃສ່ໃນການມີສ່ວນຮ່ວມຕໍ່ສັງຄົມ ແລະ ຊຸມຊົນອ້ອມຂ້າງເຂື່ອນໃນທຸກໆດ້ານ ໂດຍສະເພາະແມ່ນ ການສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມການສຶກສາຂອງນັກຮຽນທີ່ຍັງຂາດເຂີນ ການບູລະນະສ້ອມແປງ ແລະ ສະໜອງພື້ນຖານໂຄງລ່າງຢ່າງເປັນປະຈຳ.

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ, ໄດ້ດຳເນີນທຸລະກິດ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ຜ-ຟຟລ ທີ່ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນ ໃຫ້ສອດຄ່ອງໃນແຕ່ລະໄລຍະກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວ

ຂອງອຽກງານ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຜ່ານການຈັດຕັ້ງປະຕິບັດ ຜົນການດຳເນີນທຸລະກິດປະຈຳ 6 ເດືອນຕົ້ນ ປີ 2023 ສາມາດສັງລວມໄດ້ດັ່ງນີ້:

5.1 ການຜະລິດ

ປະຈຳ 6 ເດືອນຕົ້ນປີ 2023, ແຜນການຜະລິດຂອງເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແມ່ນເທົ່າກັບ 1.293,37 GWh, ປະຕິບັດຕົວຈິງສາມາດຜະລິດກະແສໄຟຟ້າໄດ້ 1.161,77 GWh ຫຼື ເທົ່າກັບ 89,93% ຂອງແຜນການ, ໂດຍທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 79,04%. ພ້ອມນັ້ນ, ແຜນການຜະລິດຈາກບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດຕາມສັດສ່ວນ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ແມ່ນ 2.327,31 GWh, ສາມາດປະຕິບັດໄດ້ຕົວຈິງ 1.923,78 GWh ຫຼື ເທົ່າກັບ 82,66% ຂອງແຜນການ, ໂດຍທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 84,83%

ສັງລວມແລ້ວ 6 ເດືອນຕົ້ນ ປີ 2023 ແຜນການຜະລິດທົ່ວ ຜ-ຟຟລ ແມ່ນເທົ່າກັບ 3.620,68 GWh, ປະຕິບັດຕົວຈິງໄດ້ 3.085,55 GWh ຫຼື ເທົ່າກັບ 85,22% ຂອງແຜນການ ແລະ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເທົ່າກັບ 82,55% ເນື່ອງຈາກປະລິມານນ້ຳໄຫຼເຂົ້າອ່າງ ບໍ່ມາຕາມແຜນການທີ່ຄາດການໄວ້ ລາຍລະອຽດໃນຕາຕະລາງລຸ່ມນີ້:

ຕາຕະລາງ 1 : ການຜະລິດພະລັງງານໄຟຟ້າປະຈຳປະຈຳ 6 ເດືອນຕົ້ນປີ 2023

ລາຍລະອຽດ	6 ເດືອນຕົ້ນປີ 2023			6 ເດືອນຕົ້ນປີ 2022	
	ປະຕິບັດໄດ້ຕົວຈິງ GWh	ແຜນການ GWh	ທຽບແຜນການ %	ປະຕິບັດໄດ້ຕົວຈິງ GWh	ທຽບເປັນ %
ເຂື່ອນ ຜ-ຟຟລ ຄຸ້ມຄອງ	1.161,77	1.293,37	89,93%	1.469,87	79,04%
ການຜະລິດໂຄງການ IPPs	1.923,78	2.327,31	82,66%	2.267,79	84,83%
ລວມ	**3.085,55**	**3.620,68**	**85,22%**	**3.737,66**	**82,55%**

5.2 ລາຍຮັບ

ຜ-ຟຟລ ມີລາຍຮັບ 6 ເດືອນຕົ້ນ ປີ 2023 ລວມທັງໝົດຈຳນວນ 1.110.841 ລ້ານກີບ, ທຽບໃສ່ໄລຍະດຽວກັນຫລຸດລົງ 118.797 ລ້ານກີບ, ສາເຫດມາຈາກການຜະລິດຂອງບັນດາເຂື່ອນ ຜ-ຟຟລ ແລະ ເຂື່ອນຜູ້ຜະລິດໄຟຟ້າເອກະລາດຕາມສັດສ່ວນ ຜະລິດບໍ່ໄດ້ຕາມແຜນ. (ຕາຕະລາງ 2)

5.3 ລາຍຈ່າຍ

ຜ-ຟຟລ ມີລາຍຈ່າຍລວມທັງໝົດຈຳນວນ 927.258 ລ້ານກີບ, ທຽບໃສ່ໄລຍະດຽວກັນຫລຸດລົງ 402.089 ລ້ານກີບ, ສາເຫດມາຈາກ ລາຍຈ່າຍຕົ້ນທຶນການຂາຍຫລຸດລົງ ແລະ ບໍ່ມີລາຍຈ່າຍຂາດທຶນຈາກອັດຕາແລກປ່ຽນ. (ຕາຕະລາງ 2)

5.4 ກຳໄລສຸດທິໃນການດຳເນີນທຸລະກິດ

ຜົນການດຳເນີນທຸລະກິດ ຂອງ ຜ-ຟຟລ ປະຈຳ 6 ເດືອນຕົ້ນປີ 2023 ມີກຳໄລ 183.583 ລ້ານກີບ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 283.292 ລ້ານກີບ (ຕາຕະລາງ 2)

ຕາຕະລາງ 2 : ລາຍຮັບ, ລາຍຈ່າຍ ແລະ ກຳໄລ(ຂາດທຶນ) ປະຈຳ 6 ເດືອນຕົ້ນປີ 2023

ລ/ດ	ເນື້ອໃນ	6 ເດືອນຕົ້ນປີ 2023 (ລ້ານກີບ)	6 ເດືອນຕົ້ນປີ 2022 (ລ້ານກີບ)	ຈຳນວນປ່ຽນແປງ (ລ້ານກີບ)	ທຽບໃສ່ 6 ເດືອນຕົ້ນ ປີ 2022 ເປັນ %
		1	2	3= 1-2	4=1/2
I	**ພາກລາຍຮັບ**	**1.110.841**	**1.229.638**	**(118.797)**	**90,34%**
1	ລາຍຮັບຈາກການຂາຍກະແສໄຟ	548.757	670.120	(121.363)	81,89%
2	ລາຍຮັບອື່ນໆ	119.007	50.766	68.241	234,42%
3	ກຳໄລຈາກອັດຕາແລກປ່ຽນ	6.268	-	-	0,00%
4	ກຳໄລຂອງຮຸ້ນຈາກການເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	436.809	508.752	(71.943)	85,86%
II	**ພາກລາຍຈ່າຍ**	**927.258**	**1.329.347**	**(402.089)**	**69,75%**
1	ລາຍຈ່າຍຕົ້ນທຶນການຂາຍ	285.691	309.739	(24.048)	92,24%
2	ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	88.302	77.338	10.964	114,18%
3	ລາຍຈ່າຍທາງການເງິນ	553.265	486.446	66.819	113,74%
4	ຂາດທຶນຈາກອັດຕາແລກປ່ຽນ		455.824	-	-
	ກຳໄລສຸດທິ	**183.583**	**(99.709)**	**283.292**	**-184,12%**

ໝາຍເຫດ: ອີງຕາມໃບລາຍງານການເງິນແບບລວມ

5.5 ການມອບພັນທະ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນ ບໍລິສັດໜຶ່ງທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປລາວ; ສະນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ດັ່ງນັ້ນ, 6 ເດືອນຕົ້ນປີ 2023 ຜ-ຟຟລ ໄດ້ມອບພັນທະໃຫ້ແກ່ລັດຖະບານ ເຊິ່ງປະກອບດ້ວຍອາກອນເງິນເດືອນ / ເບ້ຍປະຊຸມ, ອາກອນຫັກໄວ້ເອລາຈ່າຍ ແລະ ອາກອນມູນຄ່າເພີ່ມ ລວມມູນຄ່າທັງໝົດ 4.107 ລ້ານກີບ.

ລຳດັບ	ລາຍການລະອຽດ	ຈຳນວນ ລ້ານກີບ
1	ອາກອນເງິນເດືອນ / ເບ້ຍປະຊຸມ	3.659
2	ອາກອນຫັກໄວ້ເອລາຈ່າຍ	325
3	ອາກອນມູນຄ່າເພີ່ມ	123
ລວມທັງໝົດ		**4.107**

ຮັກສາການຜູ້ອຳນວຍການໃຫຍ່

ວັນແສງ ວັນນະວົງ
ຮັກສາການ ຜູ້ອຳນວຍການໃຫຍ່